# one ຂັ້ນຕອນງ່າຍໆ

## ຢຸດເຊົາການນຳໃຊ້ຢາ OPIOID ໄປໃນທາງທີ່ບໍ່ຖືກຕ້ອງ

**ທ່ານສາມາດເປັນຄົນໜຶ່ງໃນການຊ່ວຍຮັກສາໃຫ້ຄອບຄົວຂອງທ່ານມີຄວາມປອດໄພ.**

ມັນສາມາດເລີ່ມຕົ້ນໄດ້ດ້ວຍບາດກ້າວດຽວ. ໜຶ່ງການກະທຳທີ່ກ້າຫານ. ໜຶ່ງການສົນທະນາຢ່າງກົງໄປກົງມາ.

ເມື່ອເວົ້າເຖິງການປ້ອງກັນການນຳໃຊ້ຢາ **Opioid** ໄປໃນທາງທີ່ບໍ່ຖືກຕ້ອງ, ທ່ານສາມາດຈະສ້າງຄວາມແຕກຕ່າງໄດ້. ສົນທະນາກັບຄົນທີ່ທ່ານຮັກ ແລະ ແບ່ງປັນຂໍ້ເທັດຈິງ.

ໃນປັດຈຸບັນນີ້ ຢາ Opioid ແມ່ນໜຶ່ງໃນບັນດາສາເຫດຕົ້ນຕໍຂອງການເສຍຊີວິດຈາກການບາດເຈັບໃນລັດວໍຊິງຕັນ. ມີຄົນເສຍຊີວິດຍ້ອນການກິນຢາເກີນປະລິມານຫຼາຍກ່ວາຍ້ອນອຸປະຕິເຫດລົດຕຳກັນ.[1]




75 ເປີເຊັນຂອງການໃຊ້ຢາ Opioid ໃນທາງທີ່ບໍ່ຖືກຕ້ອງເລີ່ມຕົ້ນຈາກຄົນທີ່ໃຊ້ຢາທີ່ບໍ່ໄດ້ບົ່ງໄວ້ ສຳລັບພວກເຂົາ, ໂດຍປົກກະຕິແມ່ນເອົາມາຈາກໝູ່ເພື່ອນ ຫຼື ສະມາຊິກໃນຄອບຄົວ.[2]

ເດັກນ້ອຍມີແນວແນ້ມທີ່ຈະໃຊ້ຢາເສບຕິດໜ້ອຍລົງ 50 ເປີເຊັນ ເມື່ອພໍ່ແມ່ບອກໃຫ້ພວກເຂົາຮູ້ກ່ຽວກັບຄວາມສ່ຽງ.[2]

## ອິດທິພົນຂອງທ່ານແມ່ນມີຄວາມສຳຄັນ

ໃສ່ກະແຈໃສ່ຢາຂອງທ່ານໄວ້.

ສົນທະນາກັບຄົນທີ່ທ່ານຮັກກ່ຽວກັບຄວາມສ່ຽງຂອງການນຳໃຊ້ຢາ **Opioid** ໄປໃນທາງທີ່ບໍ່ຖືກຕ້ອງ.

ປຶກສາກັບທ່ານໝໍຂອງທ່ານກ່ຽວກັບວິທີອື່ນໃນການຄວບຄຸມອາການເຈັບປວດ. ຊຸກຍູ້ໃຫ້ຄົນທີ່ທ່ານຮັກເຮັດເຊັ່ນດຽວກັນ.

ກຳຈັດຢາທີ່ບໍ່ໄດ້ໃຊ້ແລ້ວຖິ້ມຢ່າງປອດໄພໃສ່ໂຄງການເກັບຢາກັບຄືນທີ່ຢູ່ໃກ້ທ່ານ. ຊອກຫາໄດ້ທີ່ **TakeBackYourMeds.org.**

Washington State Health Care Authority

# ຮັບຮູ້ຂໍ້ເທັດຈິງ

## ຢາ Opioid ແມ່ນຫຍັງ?

ຢາ **Opioid** ແມ່ນເປັນຢາສະເພາະກຸ່ມທີ່ໃຊ້ທົ່ວໄປ ເພື່ອຫຼຸດຜ່ອນຄວາມເຈັບປວດ.

ຢາເຮໂຣອີນທີ່ຜິດກົດໝາຍ ແມ່ນເປັນຢາ **opioid** ຊະນິດໜຶ່ງ ຄືກັນກັບຢາແກ້ປວດຫຼາຍຊະນິດທີ່ແພດສັ່ງ.

ຢາ **Opioid** ສາມາດສົ່ງຜົນກະທົບທາງລົບຕໍ່ສູນ ກາງໃຫ້ລາງວັນໃນສະໝອງ. ເມື່ອເວລາຜ່ານໄປ, ຜູ້ໃຊ້ຈະຕ້ອງການຫຼາຍຂຶ້ນເລື້ອຍໆ, ເຮັດໃຫ້ຕິດຢາເຫຼົ່ານີ້ຢ່າງແຮງ.[4]

# ທາງເລືອກໃນການ ບັນເທົາຄວາມ ເຈັບປວດອື່ນໆ

ຖ້າທ່ານໄດ້ຮັບຢາ Opioid ຕາມແພດສັ່ງ, ໃຫ້ລົມກັບທ່ານໝໍຂອງທ່ານ ກ່ຽວກັບທາງເລືອກອື່ນ.

ປຶກສາກັບຜູ້ໃຫ້ບໍລິການດ້ານສຸຂະພາບເຊີງພຶດ ຕິກຳ ກ່ຽວກັບວິທີການຕ່າງໆທີ່ສາມາດ ຊ່ວຍຄວບຄຸມຄວາມຕຶງຄຽດໄດ້.[3]

ລອງໃຊ້ວິທີການກາຍຍະບຳບັດ ຫຼື ການບຳບັດອື່ນໆ ເຊັ່ນ: ການຝັງເຂັມ ຫຼື ການນວດ.[3]

## ຮຽນຮູ້ເພີ່ມຕື່ມໄດ້ທີ່

# GetTheFactsRx.com

ແຫຼ່ງທີ່ມາ: [1]ພະແນກສາທາລະນະສຸກແຫ່ງລັດວໍຊິງຕັນ, [2]ອົງການຄຸ້ມຄອງການນຳໃຊ້ສານເສບຕິດໄປໃນທາງທີ່ບໍ່ຖືກຕ້ອງ ແລະ ການບໍລິການດ້ານສຸຂະພາບຈິດ, [3]ສູນຄວບຄຸມ ແລະ ການປ້ອງກັນພະຍາດ [4]ສະຖາບັນຄວບຄຸມການນຳໃຊ້ຢາເສບຕິດແຫ່ງຊາດ ສຳລັບໄວລຸ້ນ

ສຳລັບຂໍ້ມູນເພີ່ມເຕີມ, ສາມາດຕິດຕໍ່ໄດ້ທີ່:
kingcounty.gov/overdose

King County

Washington State
Health Care Authority